ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ.................ພອຄ.ນວ.ຂນອ

ວັນທີ..19...ກໍລະກົດ...2024

# ບົດບັນທຶກ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ສະບັບເລກທີ 196/ຈນວ, ລົງວັນທີ 24/02/2023;
- ອີງຕາມໜັງສືທາງລັດຖະການສະບັບເລກທີ 866/ຫວນວ, ລົງວັນທີ 25 ພຶດສະພາ 2024.

ໃນເວລາ 13:30 ໂມງ ວັນທີ15/07/2024 ປູ່ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມຮ່ວມກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ເມືອງໄຊທານີ, ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານນາງ ວັນມະນີ ພົມມະສານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ຈຸດປະສົງຂອງກອງປະຊຸມແມ່ນເພື່ອປຶກສາຫາລືກ່ຽວກັບການສະເໜີຂໍນຳໃຊ້ດິນລັດໃນຮູບແບບເຊົ່າຍາວນານ ເພື່ອນຳໃຊ້ກໍ່ສ້າງເປັນອາຄານ, ສູນສົ່ງເສີມ, ສູນຝຶກອົບຮົມ ແລະ ສູນທົດລອງນິມິດແຮງງານ ຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ຢູ່ເຂດຫຼັກ 16 ເມືອງໄຊທານີ ນະຄອນຫຼວງວຽງຈັນ ໃນເນື້ອທີ່ດິນ 28,439 ຕາແມັດ; ໃນກອງປະຊຸມໄດ້ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນກັນຢ່າງກົງໄປກົງມາ ຜ່ານການປຶກສາຫາລືໃນກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບດັ່ງນີ້:

1. ໂດຍພື້ນຖານແລ້ວໃນກອງແມ່ນເຫັນດີເປັນເອກະພາບສະໜັບສະໜູນຕາມການສະເໜີຂໍເຊົ່າດິນລັດຕາມໜັງສືສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ຢູ່ເຂດຫຼັກ 16 ເມືອງໄຊທານີ ນະຄອນຫຼວງວຽງຈັນ ສະບັບເລກທີ 023/ສຄອ.ນວ, ລົງວັນທີ 02/05/2024;

2. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກໜັງສືເຊີນທາຂະແໜງການກ່ຽວຂ້ອງລົງສຳຫຼວດເກັບກຳເອົາຂໍ້ມູນຕອນດິນ ພ້ອມແຕ້ມແຜນວາດຊັດເຈນຂອງຕອນດິນ ແລະ ສິ່ງປຸກສ້າງຕ່າງໆເພື່ອເປັນຂໍ້ມູນພື້ນຖານໃນການເຮັດບົດລາຍງານທາທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ; ສຳລັບງົບປະມານໃນການລົງເຮັດວຽກແມ່ນສະເໜີສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ເປັນຜູ້ສະໜັບສະໜູນ;

สแกนด้วย CamScanner

3. ສະເໜີ ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ຄົ້ນຄວ້າລະອຽດຄືນກ່ຽວກັບການສະເໜີຂໍເຊົ່າດິນລັດຕອນດັ່ງກ່າວໃນໄລຍະຍາວໃນອັດຕາການເຊົ່າຮູບແບບໃດ, ສາມາດເຊົ່າໃນມູນຄ່າທີ່ໃດ ຫຼື ຈະສະເໜີຂໍພັດທະນານຳໃຊ້ດິນຕອນດັ່ງກ່າວໃນຮູບແບບໃດໃຫ້ຊັດເຈນ ແລ້ວລາຍງານຫາພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ;

4. ມອບໃຫ້ຂະແໜງນິຄົມອຸດສາຫະກຳ ນະຄອນຫຼວງວຽງຈັນ ກະກຽມໜັງສືເຊີນຫາຂະແໜງການກ່ຽວຂ້ອງເພື່ອລົງສຳຫຼວດຕອນດິນ ແລະ ສັງລວມຂໍ້ມູນທັງໝົດທີ່ຜ່ານການຄົ້ນຄວ້າແລ້ວເຮັດບົດລາຍງານຫາ ທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈິ່ງເຮັດບົດບັນທຶກສະບັບນີ້ໄວ້ເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ນ. ວັນນະບີ ພົມມະສານ

ຜູ້ບັນທຶກ

สแกนด้วย CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດບັນທຶກ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ສະບັບເລກທີ 196/ຈນວ, ລົງວັນທີ 24/02/2023;
- ອີງຕາມໜັງສືທາງລັດຖະການສະບັບເລກທີ 866/ຫວນວ, ລົງວັນທີ 25 ພຶດສະພາ 2024.

ໃນເວລາ 09:00 ໂມງ ວັນທີ 19/07/2024 ຢູ່ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງຂອງພາກລັດ, ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນລ້ຳ ວົງສຸທີ ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ; ຈຸດປະສົງຂອງກອງປະຊຸມແມ່ນລົງກວດກາຕອນດິນລັດທີ່ນະຄອນຫຼວງວຽງຈັນ ຄຸ້ມຄອງໂຕຈິງພາກສະໜາມ ເພື່ອນຳໃຊ້ກໍ່ສ້າງເປັນຫ້ອງການສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ, ສູນວາງສະແດງສິນຄ້າ, ສູນຝຶກອົບຮົມ ແລະ ທົດສອບສີມືແຮງງານ ຢູ່ເຂດຫຼັກ 16, ບ້ານໂພຄຳ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ໃນເນື້ອທີ່ດິນ 28,439 ຕາແມັດ; ໃນນີ້ເປັນດິນຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ 4,301 ຕາແມັດ, ຍັງເຫຼືອ 24,138 ຕາແມັດ, ໃນເນື້ອທີ່ໆຍັງເຫຼືອເຫັນວ່າມີບຸກຄົນເຂົ້າມາປຸກສ້າງໃສ່ໃນເນື້ອທີ່ປະມານ 1,600 ຕາແມັດ. ໃນກອງປະຊຸມໄດ້ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນກັນຢ່າງກົງໄປກົງມາ, ຜ່ານການປຶກສາຫາລືໃນກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບດັ່ງນີ້:

1. ໂດຍພື້ນຖານແລ້ວໃນກອງປະຊຸມແມ່ນເຫັນດີເປັນເອກະພາບຕາມເອກະສານທີ່ກ່ຽວຂ້ອງກັບຕອນດິນດັ່ງກ່າວໃນໄລຍະຜ່ານມາ ທີ່ທາງຫ້ອງວ່າການນະຄອນຫຼວງວຽງຈັນ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງໄຊທານີ ນຳມາຜ່ານໃນກອງປະຊຸມ ແລະ ຈະໄດ້ເອົາຂໍ້ມູນດັ່ງກ່າວເຂົ້າໃນບົດລາຍງານຫາທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ;
2. ພາຍຫຼັງທີ່ຜ່ານເອກະສານກ່ຽວຂ້ອງກັບຕອນດິນແລ້ວ ຄະນະກຳມະການໂດຍແມ່ນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ໄດ້ລົງວັດແທກເກັບກຳເອົາຂໍ້ມູນຕອນດິນໂຕຈິງພາກສະໜາມ ເພື່ອຈະໄດ້ແຕ້ມແຜນວາດຕອນດິນ ແລະ ສິ່ງປຸກສ້າງຕ່າງໆປະກອບເຂົ້າໃນບົດລາຍງານຫາທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ** | **ຜູ້ບັນທຶກ**

ບຸນລ້ຳ ວົງສຸທີ